**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ລັດວິສາຫະກິດການບິນລາວ

ເລກທີ 007/ກບລ.
ທີ່ນະຄອນຫຼວງວຽງຈັນ, ວັນທີ 02 AUG 2019

# ລະບຽບກ່ຽວກັບການປະມູນ
## ອຸປະກອນເຄື່ອງຮັບໃຊ້ເທິງເຮືອບິນຂອງການບິນລາວ

**ພາກທີ່ I** : ເງື່ອນໄຂລວມ

1. ລັດວິສາຫະກິດການບິນລາວ ມີສຳນັກງານຕັ້ງຢູ່ ບ້ານເມືອງວາທົ່ງ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ມີຄວາມຍິນ ດີແຈ້ງມາຍັງ ບັນດາບໍລິສັດ ຫຼື ວິສາຫະກິດ ແລະ ຮ້ານຂາຍເຄື່ອງ ທີ່ມີຄວາມສົນໃຈທີ່ຈະເຂົ້າຮ່ວມ ການແຂ່ງຂັນປະມູນ ຜູ້ສະໜອງ ອຸປະກອນເຄື່ອງຮັບໃຊ້ເທິງເຮືອບິນຂອງການບິນລາວ.
2. ບໍລິສັດ ຫຼື ວິສາຫະກິດ, ຫ້າງຮ້ານ ທີ່ສົນໃຈເຂົ້າຮ່ວມການແຂ່ງຂັນປະມູນ ສອບຖາມໄດ້ດ້ວຍຕົນເອງຄື:
   - ນະຄອນຫຼວງວຽງຈັນ Tel: (+856 21) 513152

– ວັນທີ **13/08/2019 ເວລາ 09:00** ໂມງເປັນມື້ເປີດຊອງປະມູນ ຢູ່ທີ່ຫ້ອງປະຊຸມ ສຳນັກງານໃຫຍ່ ລັດວິສາຫະກິດການບິນລາວ (ສຳນັກງານໃຫຍ່ ລັດວິສາຫະກິດການບິນລາວສະໜາມບິນສາກົນວັດໄຕ ຊັ້ນ 4)

– ໃຫ້ບໍລິສັດ ຫຼື ວິສາຫະກິດ ແລະ ຫ້າງຮ້ານ ທີ່ເຂົ້າຮ່ວມການແຂ່ງຂັນປະມູນ ຖືຊອງປະມູນມາດ້ວຍຕົນເອງ;ພ້ອມທັງແບບຢ່າງ(ອີງໃສ່ເນື້ອໃນເອກະສານເບີ03)ໃຫ້ນຳມາສະເໜີເພື່ອເປັນແບບຢ່າງໃນວັນເປີດຊອງປະມູນ.

**ພາກທີ່ II : ບົດແນະນຳສຳລັບຜູ້ເຂົ້າຮ່ວມປະມູນ.**

**I. ເງື່ອນໄຂ**

- ບໍລິສັດ, ວິສາຫະກິດແລະ ຫ້າງຮ້ານ ທີ່ເຂົ້າຮ່ວມ ໃນການສະໜອງອຸປະກອນເຄື່ອງໃຊ້ເທິງເຮືອບິນ (ເບີ 03).

1 ບໍລິສັດ, ວິສາຫະກິດ ຫຼື ຮ້ານ ທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມລະບຽບ ແລະ ກົດໝາຍ.

2 ມີປະຫັວດການເຄື່ອນໄຫວ ຂອງບໍລິສັດ, ວິສາຫະກິດ ຫຼື ຫ້າງຮ້ານ ຢ່າງຕໍ່ເນື່ອງ ແລະ ເຮັດ ທຸລະກິດດ້ານ ການສະໜອງເຄື່ອງດື່ມ ຢ່າງໜ້ອຍ 3 ປີຂຶ້ນໄປ.

3 ມີສະຖານທີ່ຕັ້ງຂອງສຳນັກງານ, ສະຖານທີ່ຕັ້ງຂອງຮ້ານ ທີ່ແນ່ນອນ, ມີພາຫະນະນຳສົ່ງ.

4 ສາມາດສະໜອງສິນຄ້າ ຕາມວັນເວລາທີ່ຕ້ອງການ.

**II . ເອກະສານປະມູນ**

2. ໃບສະເໜີເຂົ້າຮ່ວມປະມູນ (ມີຢູ່ໃນຊອງປະມູນ).
3. ໃບອະນຸຍາດດຳເນີນທຸລະກິດ ຫຼື ທະບຽນ ວິສາຫະກິດ (ສະບັບສຳເນົາ).
4. ໃບທະບຽນອາກອນ ປີ 2018 (ສະບັບສຳເນົາ)
5. ໃບຢັ້ງຢືນຖານະການເງິນ.
6. ໃບປະກາດ ຫຼື ໃບຢັ້ງຢືນ ຂອງວິຊາການ (ສະບັບສຳເນົາ).
7. ໃບປະເມີນລາຄາທີ່ຈຳກາຂອງບໍລິສັດ ຫຼື ວິສາຫະກິດ ທຸກໆໜ້າ
8. ປະຫວັດຜົນງານຜ່ານມາ.

<u>**ໝາຍເຫດ:**</u> ເອກະສານຕ້ອງຈັດລຽງຕາມລຳດັບຂ້າງເທິງນີ້.

III . ສະກຸນເງິນ

ການປະເມີນລາຄາ ຕ້ອງເປັນສະກຸນເງິນກີບ.

IV. ການເປີດຊອງປະມູນ

ຊອງປະມູນແມ່ນບໍລິສັດ, ວິສາຫະກິດ ແລະ ຫ້າງຮ້ານ ເປັນຜູ້ຖືເຂົ້າມາດ້ວຍຕົນເອງ ໃນວັນ ແລະ ເວລາຕາມແຈ້ງການປະມູນ.

V. ການຕັດສິນເອົາຜູ້ຊະນະການປະມູນ

- ຄະນະກຳມະການປະມູນສະຫງວນສິດໃນການປະກາດຜູ້ຊະນະການປະມູນໃນວັນເປີດຊອງປະມູນ.
- ຄະນະກຳມະການປະມູນຈະແຈ້ງຜົນການປະມູນໃຫ້ ຜູ້ຊະນະ ແລະ ຜູ້ບໍ່ຊະນະການປະມູນເປັນລາຍລັກອັກສອນພາຍໃນ 05 ວັນນັບແຕ່ມື້ເປີດ ຊອງປະມູນເປັນຕົ້ນໄປ.

VI. ເງື່ອນໄຂການເຊັນສັນຍາ.

a. ພາຍຫຼັງທີ່ຜູ້ຊະນະການປະມູນໄດ້ຮັບແຈ້ງການ ຕ້ອງເຂົ້າມາເຊັນສັນຍານຳເຈົ້າຂອງໂຄງການ ພາຍໃນ 07 ວັນຕາມວັນລັດທະການ.

b. ພາຍຫຼັງເຊັນສັນຍາແລ້ວໃຫ້ນຳເອົາສັນຍາໄປຈົດທະບຽນນຳສຳນັກງານທະບຽນສານ ສ້າງພາຍໃນ 20 ວັນ, ຖ້າກາຍກຳນົດດັ່ງກ່າວຈະຖືກຕັດສິດ ແລະ ຍົກເລີກສັນຍາ. ສ່ວນຄ່າທຳນຽມຜູ້ຊະນະການປະມູນເປັນຜູ້ຮັບຜິດຊອບ.

ຜູ້ອຳນວຍການ

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ບໍລິສັດ
ລັດວິສາຫະກິດການບິນລາວ
LAO AIRLINES
ນະຄອນ ຫຼວງ ວຽງຈັນ

B. [signature]

ບຸນມາ ຈັນທະວົງສາ